ທຄຕລ ໄດ້ເຂົ້າຮ່ວມງານສຳມະນາ
ພາຍໃຕ້ຫົວຂໍ້ "ບໍລິສັດຈົດທະບຽນພົບປະຜູ້ລົງທຶນ (Opportunity Day)" ປະຈຳ 6 ເດືອນ ຕົ້ນປີ 2025



ໃນຕອນເຊົ້າ ວັນພຸດ ວັນທີ 24 ກັນຍາ 2025

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ເຂົ້າຮ່ວມງານສຳມະນາ ພາຍໃຕ້ຫົວຂໍ້ **"ບໍລິສັດຈົດທະບຽນພົບປະຜູ້ລົງທຶນ"** ປະຈຳ 6 ເດືອນ ຕົ້ນປີ 2025 ທີ່ຕະຫຼາດຫຼັກຊັບລາວ. ພ້ອມທັງມີການຖ່າຍທອດສົດຜ່ານທາງ Facebook Page: Lao Securities Exchange ໂດຍຈຸດປະສົງ ແມ່ນເພື່ອເປີດໂອກາດໃຫ້ບັນດາບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ໄດ້ພົບປະ ແລະ ນຳສະເໜີຂໍ້ມູນໃຫ້ແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ.



ຕາງໜ້າ ທຄຕລ ຂຶ້ນບັນຍາຍນຳສະເໜີ ຜົນການດຳເນີນທຸລະກິດໃນຊ່ວງ 6 ເດືອນ ຕົ້ນປີ 2025 ແລະ ແຜນທຸລະກິດໃນຕໍ່ໜ້າຂອງ ທຄຕລ ໂດຍ **ທ່ານ ນ. ພູແສງທອງ ອານຸລັກຄຳ ຮອງອຳນວຍການ ທຄຕລ, ທ່ານ ສອນນາລິນ ແສງມະນີ ຮອງຫົວໜ້າພະແນກຫ້ອງການບໍລິຫານ-ການເງິນ ແລະ ທ່ານ ວັນປະເສີດ ບຸນມະຜົນ ຮອງຫົວໜ້າ ພະແນກຄົ້ນຄວ້າ ແລະ ພັດທະນາ.**

ງານສຳມະນາໃນຄັ້ງນີ້ ບໍ່ພຽງແຕ່ເປັນເວທີໃຫ້ແກ່ນັກລົງທຶນ, ສື່ມວນຊົນ ແລະ ຜູ້ທີ່ມີຄວາມສົນໃຈໃນການຊື້-ຂາຍຮຸ້ນ ໄດ້ແລກປ່ຽນຂໍ້ມູນ ແລະ ຖາມ-ຕອບຂໍ້ຂ້ອງໃຈ ກ່ຽວກັບການດຳເນີນທຸລະກິດຂອງ ທຄຕລ ຢ່າງກົງໄປກົງມາ, ແຕ່ຍັງເປັນການສົ່ງເສີມກິດຈະກຳຊື້-ຂາຍຮຸ້ນ ໃນຕະຫຼາດຫຼັກຊັບລາວ ພາຍໃຕ້ຮູບແບບກິດຈະກຳນັກລົງທຶນສຳພັນ Investor's Relations (IR) ຂອງການຊື້-ຂາຍຮຸ້ນ ໃນຕະຫຼາດຫຼັກຊັບລາວ (LSX) ໃຫ້ມີຄວາມຄຶກຄື້ນ ແລະ ມີສີສັນຫຼາຍຂຶ້ນ.